**ອົງການຂົນສົ່ງ Riverside**
**ແບບຟອມຮ້ອງຮຽນ Title VI**

ຈຸດປະສົງຂອງແບບຟອມນີ້ແມ່ນເພື່ອຊ່ວຍທ່ານໃນການຍື່ນການຮ້ອງຮຽນ Title VI ຕໍ່ກັບອົງການຂົນສົ່ງ Riverside (RTA). ຖ້າທ່ານບໍ່ພໍໃຈຕໍ່ກັບຜົນການສືບສວນການຮ້ອງຮຽນຂອງທ່ານໂດຍ RTA, ທ່ານອາດຈະໃຊ້ແບບຟອມນີ້ເພື່ອຍື່ນການຮ້ອງຮຽນ Title VI ນໍາອົງການຄຸ້ມຄອງການຂົນສົ່ງຂອງລັດຖະບານກາງ (Federal Transit Administration). ທ່ານບໍ່ຈໍາເປັນຕ້ອງໃຊ້ແບບຟອມນີ້; ຈົດໝາຍທີ່ມີຂໍ້ມູນແບບດຽວກັນກໍພຽງພໍ.

| | | | | |
|---|---|---|---|---|
| ຂໍ້ I | | | | |
| ຊື່: | | | | |
| ທີ່ຢູ່: | | | | |
| ໂທລະສັບ (ເຮືອນ): | | | ໂທລະສັບ (ບ່ອນເຮັດວຽກ) | |
| ໂທລະສັບ (ມືຖື): | | | ທີ່ຢູ່ອີເມວ | |
| ມີຄວາມຕ້ອງການດ້ານຮູບແບບທີ່ສາມາດເຂົ້າເຖິງໄດ້ບໍ? | ຕົວພິມໃຫຍ່ | | ເທັບສຽງ | |
| | TDD | | ອື່ນໆ | |

| | | |
|---|---|---|
| ຂໍ້ II | | |
| ທ່ານກໍາລັງຍື່ນການຮ້ອງຮຽນນີ້ໃນນາມຕົນເອງບໍ? (ໝາຍເອົາອັນໜຶ່ງ) | ແມ່ນ* | ບໍ່ |

*ຖ້າທ່ານຕອບວ່າ "ແມ່ນ" ຕໍ່ກັບຄໍາຖາມນີ້, ໃຫ້ໄປຫາຂໍ້ກ III

ຖ້າບໍ່, ກະລຸນາບອກຊື່ ແລະ ຄວາມສໍາພັນຂອງບຸກຄົນທີ່ທ່ານກໍາລັງຮ້ອງຮຽນໃຫ້.

ຊື່:______________________________ ຄວາມສໍາພັນ:_____________________________

ກະລຸນາອະທິບາຍຍ້ອນຫຍັງທ່ານຈຶ່ງຍື່ນຮ້ອງຮຽນໃຫ້ພາກສ່ວນທີ 3.

_______________________________________________________________
_______________________________________________________________
_______________________________________________________________
_______________________________________________________________
_______________________________________________________________
_______________________________________________________________
_______________________________________________________________
_______________________________________________________________

| | | |
|---|---|---|
| ກະລຸນາຢືນຢັນວ່າທ່ານໄດ້ຮັບການອະນຸຍາດຈາກພາກສ່ວນທີ່ປະສົບກັບຄວາມທຸກ ຖ້າທ່ານກໍາລັງຍື່ນຮ້ອງຮຽນໃນນາມພາກສ່ວນທີ 3? (ໝາຍເອົາອັນໜຶ່ງ) | ແມ່ນ* | ບໍ່ |

## ຂໍ້ III

ຂ້ອຍເຊື່ອວ່າການເລືອກທີ່ຂ້ອຍປະສົບແມ່ນອີງໃສ່: (ໝາຍເອົາທຸກຂໍ້ທີ່ກ່ຽວຂ້ອງ)

[ ] ເຊື້ອຊາດ [ ] ສີຜິວ [ ] ຊາດກຳເນີດ

ວັນທີເກີດການເລືອກປະຕິບັດທີ່ກ່າວຫາ (ເດືອນ, ວັນ, ປີ): ___________________________

ອະທິບາຍຢ່າງຈະແຈ້ງເທົ່າທີ່ຈະເປັນໄປໄດ້ກ່ຽວກັບສິ່ງທີ່ເກີດຂຶ້ນ ແລະ ຍ້ອນຫຍັງທ່ານຈຶ່ງເຊື່ອວ່າທ່ານໄດ້ຖືກເລືອກປະຕິບັດ. ໃຫ້ລາຍລະອຽດກ່ຽວກັບທຸກຄົນທີ່ມີສ່ວນກ່ຽວຂ້ອງ. ບອກຊື່ ແລະ ຂໍ້ມູນຕິດຕໍ່ຂອງບຸກຄົນທີ່ເລືອກປະຕິບັດຕໍ່ທ່ານ (ຖ້າຮູ້) ເຊັ່ນດຽວກັບຊື່ ແລະ ຂໍ້ມູນຕິດຕໍ່ຂອງພະຍານຕ່າງໆ. ຖ້າຕ້ອງການບ່ອນຫວ່າງຕື່ມອີກ, ກະລຸນາໃຊ້ດ້ານຫຼັງຂອງແບບຟອມນີ້ ຫຼື ຕິດຄັດໜ້າເຈ້ຍເພີ່ມເຕີມ ແລະ ລະບຸເລກທີຂໍ້ນີ້.

| | | |
|---|---|---|
| ຂໍ້ IV | | |
| ທ່ານເຄີຍຍື່ນການຮ້ອງຮຽນ Title VI ນຳອົງການນີ້ມາກ່ອນບໍ? (ໝາຍເອົາອັນໜຶ່ງ) | ແມ່ນ | ບໍ່ |
| ຂໍ້ V | | |
| ທ່ານເຄີຍຍື່ນການຮ້ອງຮຽນນີ້ນຳອົງການຂັ້ນລັດຖະບານກາງ, ລັດ ຫຼື ທ້ອງຖິ່ນອື່ນໃດໆບໍ ຫຼື ນຳສານຂັ້ນລັດຖະບານກາງ ຫຼື ຂັ້ນລັດແມ່ນບໍ? (ໝາຍເອົາອັນໜຶ່ງ) | ແມ່ນ** | ບໍ່ |
| **ຖ້າແມ່ນ, ໃຫ້ໝາຍເອົາທຸກຂໍ້ທີ່ກ່ຽວຂ້ອງ:<br>[ ] ອົງການຂັ້ນລັດຖະບານກາງ: ____________________ [ ] ອົງການຂັ້ນລັດ: ____________________<br>[ ] ສານຂັ້ນລັດຖະບານກາງ: ____________________ [ ] ອົງການຂັ້ນທ້ອງຖິ່ນ: ____________________<br>[ ] ສານຂັ້ນລັດ: ____________________ | | |
| ກະລຸນາໃຫ້ຂໍ້ມູນຕິດຕໍ່ຈາກອົງການ ຫຼືສານບ່ອນທີ່ຍື່ນການຮ້ອງຮຽນ. | | |
| ຊື່: | | |
| ຕຳແໜ່ງ: | | |
| ອົງການ: | | |
| ທີ່ຢູ່: | | |
| ເບີໂທລະສັບ: | | |
| ຂໍ້ VI | | |
| ຊື່ຂອງອົງການທີ່ຖືກຮ້ອງຮຽນ: | | |
| ບຸກຄົນຕິດຕໍ່: | | |
| ຕຳແໜ່ງ: | | |
| ເບີໂທລະສັບ: | | |

ທ່ານອາດຈະຕິດຄັດເອກະສານເປັນລາຍລັກອັກສອນ ຫຼື ຂໍ້ມູນທີ່ທ່ານຄິດວ່າກ່ຽວຂ້ອງກັບການຮ້ອງຮຽນຂອງທ່ານ.

ລາຍເຊັນ (ການຮ້ອງຮຽນທີ່ບໍ່ມີລາຍເຊັນແມ່ນບໍ່ສາມາດຮັບເອົາໄດ້.)

____________________________________ ________________________

(ລາຍເຊັນ) (ວັນທີ)

ພວກເຮົາຈະຈຳເປັນຕ້ອງມີການຍິນຍອມເຫັນດີຈາກທ່ານເພື່ອເປີດເຜີຍຊື່ຂອງທ່ານ, ຖ້າຈຳເປັນ, ໃນລະຫວ່າງການດຳເນີນການສືບສວນ. ສະນັ້ນ, ພວກເຮົາຕ້ອງການແບບຟອມການຍິນຍອມທີ່ມີລາຍເຊັນຈາກທ່ານ. (ຖ້າທ່ານກຳລັງຍື່ນການຮ້ອງຮຽນນີ້ໃຫ້ບຸກຄົນຜູ້ທີ່ທ່ານອ້າງວ່າໄດ້ຖືກເລືອກປະຕິບັດ, ໃນກໍລະນີສ່ວນໃຫຍ່ ພວກເຮົາຈະຈຳເປັນຕ້ອງມີແບບຟອມການຍິນຍອມທີ່ມີລາຍເຊັນຈາກບຸກຄົນນັ້ນ). ເບິ່ງແບບຟອມທີ່ຕິດຄັດມາ. ກະລຸນາສົ່ງແບບຟອມຮ້ອງຮຽນທີ່ປະກອບຂໍ້ມູນ ແລະເຊັນຊື່ແລ້ວທາງໄປສະນີ (ກະລຸນາອັດສຳເນົາໄວ້ເປັນບັນທຶກຂອງທ່ານ) ແລະ ແບບຟອມການຍິນຍອມ ທາໜຶ່ງ (ຫຼືຫຼາຍ) ອົງການຕໍ່ໄປນີ້:

ຂໍແນະນຳໃຫ້ທ່ານຍື່ນການຮ້ອງຮຽນຂອງທ່ານນຳ *RTA*
ກ່ອນທີ່*:*

Attn: Chief Executive Officer
P.O. Box 59968
Riverside, CA  92517

Federal Transit Administration Office of Civil Rights
Attn: Title VI Program Coordinator
400 7th Street SW Room 9100
Washington, DC  20590

## ແບບຟອມການຍິນຍອມຕາມກົດໝາຍວ່າດ້ວຍຄວາມເປັນສ່ວນຕົວ

ວັນທີ:_______________

ເຖິງບຸກຄົນທີ່ອາດຈະກ່ຽວຂ້ອງ:

ຂ້ອຍຮູ້ວ່າກົດໝາຍວ່າດ້ວຍຄວາມເປັນສ່ວນຕົວປີ 1974 ຫ້າມການເປີດເຜີຍຂໍ້ມູນສ່ວນຕົວໂດຍບໍ່ມີການຍິນຍອມຂອງຂ້ອຍ, ສະນັ້ນ ດ້ວຍການເຊັນຊື່ໃນແບບຟອມນີ້, ຂ້ອຍໃຫ້ອະນຸຍາດແກ່ອົງການ (ບັນດາອົງການ) ຕໍ່ໄປນີ້ ເຮັດການສອບຖາມ ແລະ/ຫຼື ຮ້ອງຂໍເອົາຂໍ້ມູສ່ວນຕົວໃນນາມຂ້ອຍກ່ຽວກັບເລື່ອງທີ່ລະບຸໄວ້ຢູ່ຂ້າງລຸ່ມ.

Riverside Transit Agency
Attn: Chief Executive Officer
P.O. Box 59968
Riverside, CA 92517

Federal Transit Administration Office of Civil Rights
Attn: Title VI Program Coordinator
400 7th Street SW Room 9100
Washington, DC 20590

ຊື່:____________________________________________________________

(ກະລຸນາຂຽນເປັນຕົວພິມ)

ທີ່ຢູ່:__________________________________________________________

ເມືອງ, ລັດ, ລະຫັດໄປສະນີ:______________________________________________

ໂທລະສັບ (____)___________________

ເລກປະກັນສັງຄົມ:_________________________________

ເລກທີການຮ້ອງຮຽນ/ກໍລະນີ (ຖ້າມີ): ___________________________________________

ອົງການ (ບັນດາອົງການ) ທີ່ກ່ຽວຂ້ອງ:_________________________________________________

ຖ້າມັນຈະຈຳເປັນໃນການເປີດເຜີຍຂໍ້ມູນຕ່າງໆຕໍ່ກັບພາກສ່ວນທີສາມ ເຊັ່ນວ່າ ພໍ່ແມ່ ຫຼືຄູ່ສົມລົດ, ກະລຸນາບອກຊື່ຂອງພາກສ່ວນທີສາມຢູ່ບ່ອນນີ້:____________________________________

__________________________________________________________________________

ກະລຸນາອະທິບາຍເຫດການໂດຍຫຍໍ້:

__________________________________________________________________________

__________________________________________________________________________

__________________________________________________________________________

__________________________________________________________________________

___________________________________ ____________________________

ລາຍເຊັນອະນຸຍາດ ວັນທີ

## ອົງການຂົນສົ່ງ RIVERSIDE
## ຂັ້ນຕອນສືບສວນການຮ້ອງຮຽນ TITLE VI

ມັນແມ່ນນະໂຍບາຍຂອງອົງການຂົນສົ່ງ Riverside, ໃນຖານະເປັນຜູ້ຮັບທຶນຈາກອົງການຄຸ້ມຄອງການຂົນສົ່ງຂອງລັດຖະບານກາງ (Federal Transit Administration), ໃນການຮັບປະກັນການປະຕິບັດຕາມ Title VI ຂອງກົດໝາຍວ່າດ້ວຍສິດທິພົນລະເມືອງປີ 1964; 49 CFR, ພາກ 21; ອີງຕາມກົດໝາຍ ແລະ ລະບຽບດັ່ງກ່າວ ບໍ່ມີໃຜຈະຖືກຕັດອອກຈາກການເຂົ້າຮ່ວມ ຫຼື ຖືກປະຕິເສດສິດທິປະໂຫຍດ, ຫຼື ຖືກເລືອກປະຕິບັດບົນພື້ນຖານດ້ານເຊື້ອຊາດ, ສີຜິວ ຫຼື ຊາດກຳເນີດ, ບໍ່ວ່າຈະຢູ່ພາຍໃຕ້ໂຄງການ ຫຼື ກິດຈະກຳໃດໆກໍຕາມທີ່ໄດ້ຮັບການຊ່ວຍເຫຼືອດ້ານການເງິນ.

ທຸກການຮ້ອງຮຽນທີ່ກ່າວຫາວ່າອົງການຂົນສົ່ງ Riverside (RTA) ບໍ່ປະຕິບັດຕາມກົດລະບຽບຂອງ Title VI ຕ້ອງຖືກສົ່ງເປັນລາຍລັກອັກສອນຫາຫົວໜ້າເຈົ້າໜ້າທີ່ບໍລິຫານ, P.O. Box 59968, Riverside, CA 92517. ຜູ້ຮ້ອງຮຽນອາດຈະໃຊ້ແບບຟອມການຮ້ອງຮຽນ Title VI ຂອງ RTA ເພື່ອສົ່ງການຮ້ອງຮຽນຂອງເຂົາເຈົ້າ ຫຼື ຖ້າບໍ່ໃຊ້ແບບຟອມນັ້ນ, ການຮ້ອງຮຽນເປັນລາຍລັກອັກສອນຕ້ອງຢ່າງໜ້ອຍໃຫ້ຂໍ້ມູນຕໍ່ໄປນີ້:

a) ການກະທຳສະເພາະທີ່ເປັນການບໍ່ປະຕິບັດຂອງ RTA ທີ່ກ່າວຫາ;
b) ວັນທີຂອງການບໍ່ປະຕິບັດຂອງ RTA ທີ່ກ່າວຫາ;
c) ລະບຸເຫດຜົນຍ້ອນຫຍັງຝ່າຍຮ້ອງຮຽນຈຶ່ງເຊື່ອວ່າ RTA ບໍ່ປະຕິບັດຕາມກົດລະບຽບ Title VI ທີ່ກ່າວຫາ;
d) ຊື່ ແລະ ທີ່ຢູ່ຂອງຜູ້ຮ້ອງຮຽນ (ແລະ ບຸກຄົນທີ່ຖືກເລືອກປະຕິບັດ ຖ້າຕ່າງຈາກຜູ້ຮ້ອງຮຽນ); ແລະ
e) ຖ້າກ່ຽວຂ້ອງ, ສະຖານະຊົນເຜົ່າສ່ວນນ້ອຍ Title VI ຂອງຜູ້ຮ້ອງຮຽນ (ຫຼື ບຸກຄົນທີ່ຖືກເລືອກປະຕິບັດ ຖ້າຕ່າງຈາກຜູ້ຮ້ອງຮຽນ).
f) ຫຼັງຈາກໄດ້ຮັບການຮ້ອງຮຽນ Title VI ເປັນລາຍລັກອັກສອນແລ້ວ, ຫົວໜ້າເຈົ້າໜ້າທີ່ບໍລິຫານຈະຕິດຕໍ່ຫາຫົວໜ້າຝ່າຍຊັບພະຍາກອນມະນຸດ ເພື່ອໃຫ້ຂໍ້ມູນລວມຂອງການຮ້ອງຮຽນ ແລະ ຮ້ອງຂໍການສືບສວນກ່ຽວກັບການຮ້ອງຮຽນ:

ຫົວໜ້າຝ່າຍຊັບພະຍາກອນມະນຸດຈະປະສານຄວາມພະຍາຍາມຕ່າງໆໃນການສືບສວນການກະທຳທີ່ເປັນການບໍ່ປະຕິບັດຕາມກົດລະບຽບ Title VI ທີ່ຖືກກ່າວຫາໃນການຮ້ອງຮຽນ ແລະ ກະກຽມການຕອບຄືນເປັນລາຍລັກອັກສອນ. ການຕອບຄືນເປັນລາຍລັກອັກສອນຈະຖືກສົ່ງຫາຫົວໜ້າເຈົ້າໜ້າທີ່ບໍລິຫານພາຍໃນ 10 ວັນນັບຈາກວັນທີທີ່ຫົວໜ້າຝ່າຍຊັບພະຍາກອນມະນຸດໄດ້ຮັບການຮ້ອງຮຽນ.

ຫຼັງຈາກກວດເບິ່ງການສົ່ງການສືບສວນເປັນລາຍລັກອັກສອນແລ້ວ ແລະ ການສືບສວນທີ່ເປັນເອກະລາດທີ່ເຫັນວ່າເໝາະສົມທີ່ດຳເນີນໂດຍ RTA, ຫົວໜ້າເຈົ້າໜ້າທີ່ບໍລິຫານຈະ:

a) ອອກຄຳຕັດສິນເຊິ່ງຈະເປັນສຸດທ້າຍ ແລະ ແຈ້ງບອກທຸກພາກສ່ວນທີ່ກ່ຽວຂ້ອງກ່ຽວກັບຄຳຕັດສິນນີ້ເປັນລາຍລັກອັກສອນ; ຫຼື
b) ຕາມການເລືອກພຽງຝ່າຍດຽວຂອງຫົວໜ້າເຈົ້າໜ້າທີ່ບໍລິຫານ, ດຳເນີນການໄຕ່ສວນບໍ່ເປັນທາງການເຊິ່ງພາກສ່ວນເຂົ້າຮ່ວມທີ່ສົນໃຈຈະມີໂອກາດສະແດງຄຳຄິດເຫັນຂອງເຂົາເຈົ້າ ລວມທັງຂໍ້ເທັດຈິງ, ເອກະສານ, ຄຳແກ້ຕົວ ແລະ ຂໍ້ມູນດ້ານວິຊາການທີ່ສະໜັບສະໜູນ.
    - ຝ່າຍຕ່າງໆອາດຈະ, ແຕ່ບໍ່ຈຳເປັນຕ້ອງ, ມີທະນາຍຄວາມເປັນຜູ້ຕາງໜ້າຢູ່ໃນການໄຕ່ສວນ ເຊິ່ງຈະບໍ່ຂຶ້ນກັບກົດລະບຽບທາງການກ່ຽວກັບຫຼັກຖານ ຫຼື ຂັ້ນຕອນດຳເນີນການ.
    - ຫຼັງຈາກການໄຕ່ສວນບໍ່ເປັນທາງການ, ຫົວໜ້າເຈົ້າໜ້າທີ່ບໍລິຫານຈະອອກຄຳຕັດສິນ ເຊິ່ງຈະເປັນສຸດທ້າຍ ແລະ ແຈ້ງບອກທຸກຝ່າຍທີ່ກ່ຽວຂ້ອງເປັນລາຍລັກອັກສອນ.

**ອົງການຄຸ້ມຄອງການຂົນສົ່ງຂອງລັດຖະບານກາງ (FTA)**
**ຂັ້ນຕອນສືບສວນການຮ້ອງຮຽນ TITLE VI**

ຝ່າຍທີ່ບໍ່ພໍໃຈຕໍ່ກັບຄໍາຕັດສິນສຸດທ້າຍຂອງຫົວໜ້າເຈົ້າໜ້າທີ່ບໍລິຫານຂອງອົງການຂົນສົ່ງ Riverside, ບໍ່ວ່າຫຼັງຈາກການທົບທວນຄືນການສົ່ງຄໍາຮ້ອງຮຽນເປັນລາຍລັກອັກສອນ ຫຼື ການໄຕ່ສວນບໍ່ເປັນທາງການຫຼືບໍ່ກໍຕາມ, ອາດຈະສົ່ງການຮ້ອງຮຽນຂອງເຂົາເຈົ້າຫາອົງການ FTA ຕາມທີ່ຢູ່ຂ້າງລຸ່ມບໍ່ໃຫ້ກາຍ 180 ວັນຫຼັງຈາກວັນທີເກີດການເລືອກປະຕິບັດ, ເວັ້ນເສຍແຕ່ວ່າມີການຂະຫຍາຍເວລາການຍື່ນຮ້ອງຮຽນໂດຍ FTA.

Federal Transit Administration Office of Civil Rights
Attn: Title VI Program Coordinator
400 7th Street SW Room 9100
Washington, DC 20590

<u>ການຮັບເອົາຄໍາຮ້ອງຮຽນ</u>
ເມື່ອອົງການ FTA ຮັບເອົາຄໍາຮ້ອງຮຽນໄວ້ສືບສວນແລ້ວ, FTA ຈະແຈ້ງບອກຜູ້ຮັບທຶນ ຫຼື ຜູ້ຮັບທຶນຍ່ອຍທີ່ແມ່ນຜູ້ຖືກກ່າວຫາຕໍ່ກັບການຮ້ອງຮຽນ Title VI ແລະ ຮ້ອງຂໍໃຫ້ອົງການດັ່ງກ່າວຕອບສະໜອງເປັນລາຍລັກອັກສອນຕໍ່ກັບຄໍາກ່າວຫາຂອງຜູ້ຮ້ອງຮຽນ. ເມື່ອຜູ້ຮ້ອງຮຽນຕົກລົງເຫັນດີໃຫ້ເປີດການຮ້ອງຮຽນຕໍ່ກັບຜູ້ຮັບທຶນ ຫຼື ຜູ້ຮັບທຶນຍ່ອຍແລ້ວ, ອົງການ FTA ຈະສົ່ງການຮ້ອງຮຽນຫາອົງການນັ້ນ. ຖ້າຜູ້ຮ້ອງຮຽນບໍ່ຕົກລົງເຫັນດີໃຫ້ເປີດຄໍາຮ້ອງຮຽນຕໍ່ກັບຜູ້ຮັບທຶນ ຫຼື ຜູ້ຮັບທຶນຍ່ອຍແລ້ວ, ອົງການ FTA ອາດຈະເລືອກປິດການຮ້ອງຮຽນນັ້ນ. ອົງການ FTA ພະຍາຍາມເຮັດສໍາເລັດການສືບສວນຄໍາຮ້ອງຮຽນ FTA ພາຍໃນ 180 ວັນ ນັບຈາກວັນທີທີ່ອົງການ FTA ຮັບເອົາຄໍາຮ້ອງຮຽນໄວ້ສືບສວນ.

<u>ການສືບສວນ</u>
ອົງການ FTA ຈະເຮັດການສືບສວນຢ່າງຮີບດ່ວນໃນທຸກຄັ້ງທີ່ການທົບທວນການປະຕິບັດຕາມ, ລາຍງານ, ການຮ້ອງຮຽນ ຫຼື ຂໍ້ມູນອື່ນຕ່າງໆຊີ້ບອກເຖິງການບໍ່ປະຕິບັດຕາມທີ່ເປັນໄປໄດ້ຕໍ່ກັບສ່ວນນີ້. ການສືບສວນຈະລວມເອົາ, ໃນບ່ອນທີ່ເໝາະສົມ, ການກວດເບິ່ງວິທີປະຕິບັດ ແລະ ນະໂຍບາຍທີ່ກ່ຽວຂ້ອງຂອງຜູ້ຮັບທຶນ, ສະພາບການທີ່ການບໍ່ປະຕິບັດຕາມກົດລະບຽບນີ້ເກີດຂຶ້ນ ແລະ ປັດໃຈອື່ນທີ່ກ່ຽວຂ້ອງກັບການຕັດສິນກໍານົດວ່າຜູ້ຮັບທຶນບໍ່ປະຕິບັດຕາມກົດລະບຽບ Title VI ແທ້ຫຼືບໍ່.

<u>ຈົດໝາຍແຈ້ງຜົນການສືບສວນ ແລະ ການແກ້ໄຂບັນຫາ</u>
ຫຼັງຈາກການສືບສວນສໍາເລັດແລ້ວ, ຫ້ອງການສິດທິພົນລະເມືອງຂອງ FTA ຈະສົ່ງໃຫ້ຜູ້ຮ້ອງຮຽນ ແລະ ຜູ້ຮັບທຶນ ໜຶ່ງໃນສາມຈົດໝາຍຕໍ່ໄປນີ້ອີງຕາມຜົນການສືບສວນຂອງຕົນ:

a. ຈົດໝາຍແຈ້ງບອກການແກ້ໄຂບັນຫາທີ່ອະທິບາຍຂັ້ນຕອນຕ່າງໆທີ່ຜູ້ຮັບທຶນ ຫຼື ຜູ້ຮັບທຶນຍ່ອຍໄດ້ດໍາເນີນ ຫຼື ສັນຍາຈະດໍາເນີນເພື່ອປະຕິບັດຕາມກົດລະບຽບ Title VI.
b. ຈົດໝາຍແຈ້ງບອກຜົນການສືບສວນທີ່ອອກໃຫ້ເມື່ອບໍ່ພົບວ່າຜູ້ຮັບທຶນ ຫຼື ຜູ້ຮັບທຶນຍ່ອຍບໍ່ປະຕິບັດຕາມກົດລະບຽບ Title VI. ຈົດໝາຍນີ້ຈະລວມມີຄໍາອະທິບາຍຍ້ອນຫຍັງຜູ້ຮັບທຶນ ຫຼື ຜູ້ຮັບທຶນຍ່ອຍບໍ່ຖືກພົບວ່າບໍ່ປະຕິບັດຕາມ, ແລະ ໃຫ້ການແຈ້ງບອກກ່ຽວກັບສິດທິອຸທອນຂອງຜູ້ຮ້ອງຮຽນ. ຖ້າກ່ຽວຂ້ອງ, ຈົດໝາຍສາມາດລວມມີລາຍການຂອງການລະເມີດ ຫຼື ຄວາມກັງວົນດ້ານລະບຽບການ ເຊິ່ງສາມາດເຮັດໃຫ້ຜູ້ຮັບທຶນ ຫຼື ຜູ້ຮັບທຶນຍ່ອຍຮັບຮູ້ວ່າບາງວິທີປະຕິບັດສະເພາະແມ່ນໜ້າສົງໄສ ແລະ ຖ້າບໍ່ມີການດໍາເນີນການແກ້ໄຂ, ການຄົ້ນພົບການລະເມີດໃນອະນາຄົດອາດຈະເປັນໄປໄດ້.
c. ຈົດໝາຍແຈ້ງບອກຜົນການສືບສວນທີ່ອອກໃຫ້ເມື່ອພົບວ່າຜູ້ຮັບທຶນ ຫຼື ຜູ້ຮັບທຶນຍ່ອຍບໍ່ປະຕິບັດຕາມ. ຈົດໝາຍຈະລວມເອົາແຕ່ລະການລະເມີດທີ່ອ້າງອີງກົດລະບຽບທີ່ນໍາໃຊ້, ລາຍລະອຽດໂດຍຫຍໍ້ກ່ຽວກັບການແກ້ໄຂທີ່ສະເໜີມາ, ແຈ້ງການກ່ຽວກັບກໍານົດເວລາຕໍ່ກັບຂະບວນການໄກ່ເກ່ຍແກ້ໄຂ, ຜົນຕາມມາຂອງການບໍ່

ບັນລຸໄດ້ການປະຕິບັດຕາມແບບສະໝັກໃຈ ແລະ ຂໍ້ສະເໜີໃຫ້ການຊ່ວຍເຫຼືອແກ່ຜູ້ຮັບທຶນ ຫຼື ຜູ້ຮັບທຶນຍ່ອຍໃນການສ້າງແຜນການແກ້ໄຂສໍາລັບການປະຕິບັດຕາມ, ຖ້າເໝາະສົມ.

ຂະບວນການອຸທອນ

ຈົດໝາຍແຈ້ງຜົນການສືບສວນ ແລະ ການແກ້ໄຂບັນຫາຈະໃຫ້ໂອກາດແກ່ຜູ້ຮ້ອງຮຽນ ແລະ ຜູ້ຮັບທຶນ ຫຼື ຜູ້ຮັບທຶນຍ່ອຍໃນການໃຫ້ຂໍ້ມູນເພີ່ມເຕີມທີ່ຈະເຮັດໃຫ້ FTA ພິຈາລະນາຂໍ້ສະຫຼຸບຂອງຕົນຄືນໃໝ່. ໂດຍທົ່ວໄປແລ້ວ, FTA ຮ້ອງຂໍໃຫ້ຝ່າຍຕ່າງໆໃນການຮ້ອງຮຽນໃຫ້ຂໍ້ມູນເພີ່ມເຕີມນີ້ພາຍໃນ 60 ວັນນັບຈາກວັນທີສົ່ງຈົດໝາຍແຈ້ງຜົນການສືບສວນຂອງ FTA. ຫຼັງຈາກກວດເບິ່ງຂໍ້ມູນນີ້ແລ້ວ, ຫ້ອງການສິດທິພົນລະເມືອງຂອງ FTA ຈະຕອບຄືນ ໂດຍການອອກຈົດໝາຍແຈ້ງບອກການແກ້ໄຂບັນຫາ ຫຼື ຜົນການສືບສວນໃໝ່ໃຫ້ແກ່ຝ່າຍຮ້ອງຮຽນ ຫຼື ໂດຍການແຈ້ງບອກຝ່າຍຮ້ອງຮຽນວ່າຈົດໝາຍແຈ້ງບອກການແກ້ໄຂບັນຫາ ຫຼື ຜົນການສືບສວນສະບັບເດີມແມ່ນຍັງມີຜົນຄືເກົ່າ. FTA ພະຍາຍາມສົ່ງຈົດໝາຍເຫຼົ່ານີ້ພາຍໃນ 30 ຫາ 60 ວັນນັບຈາກໄດ້ຮັບການຮ້ອງຮຽນ.